**ການບ້ານບົດທີ 1 ພາກຕົ້ນ**

# ໂຊໂລ ຜູ້ປະກາດແກ່ຄົນຕ່າງຊາດ

*ກ່ອນອື່ນ ໃຫ້ອ່ານຂໍ້ຄວາມທີ່ຢູ່ກັບຮູບ*
*ຕໍ່ໄປໃຫ້ຕອບຄຳຖາມໂດຍຕື່ມຂໍ້ຄວາມທີ່ຂາດ.*

**1** ເພື່ອໃຫ້ທ່ານຊອກຫາອາຈານໂປໂລໃນຮູບ ຈະໃຫ້ເພິ່ນນຸ່ງເຄື່ອງສີຂີ້ເທົ່າໃນທຸກຮູບ. ໃຫ້ທ່ານອ່ານຄຳເວົ້າໃນຮູບກ່ອນແລ້ວຕອບຄຳຖາມທີ່ຫຼັງ. ໃນຮູບຕໍ່ໄປນີ້ໝາຍ ໂຊໂລໄວ້ດ້ວຍຕົວອັກສອນ ____________







**2** ຂ້າງຂາວນີ້ເຫັນວ່າເຂົາຈະຈັບຄົນໜຶ່ງໄວ້ ເຖິງວ່າຂ້ອຍເປັນຊາດຢິວກໍຕາມ ຂັງຄຸກ (ໃຫ້ຕື່ມຄວາມທີ່ຂາດ). ແຕ່ພະເຈົ້າຈະໃຊ້ໃຫ້ໄປຫາຄົນ ຕ່າງຊາດ (ກຈກ 22:21)

ກ. ຄົນທີ່ເຂົາຈະຈັບຊື່ວ່າ ____________

ຂ. ເພິ່ນເປັນຊາດ _________________

ຄ. ເພິ່ນປະກາດພະທຳໃຫ້ຄົນ ເອົາໄປຂ້າ ທີ່ບໍ່ເປັນຊາດຢິວ ແຕ່ເປັນ ຄົນ ________

**3** ກ. ໂຊໂລເປັນສັນຊາດໃດ? ___________________________________________

ຂ. ພະເຈົ້າໃຫ້ເພິ່ນໄປປະກາດພະທຳໃຫ້ໃຜ? ______________________________

**4** ໂຊໂລທີ່ເປັນຊາດຢິວ ໄປປ່າວປະກາດໃຫ້ຄົນຕ່າງຊາດ.

ກ. ຕາມໃນຮູບຕໍ່ໄປນີ້ ຊາດຢິວສືບຕໍ່ລົງມາຈາກໃຜ? ______________________________




ຂ. ໂຊໂລເປັນລູກຫຼານຂອງໃຜ? ____________________________________________

**5** ຊາດຢິວທຸກຄົນເປັນລູກຫຼານຂອງອັບລາຮາມ. ໃຫ້ອ່ານ ມັດທາຍ 1:1

ກ. ພະເຍຊູສືບຕະກຸນເນື້ອງມາຈາກໃຜ? ____________________________________

ຂ. ດັ່ງນັ້ນ ພະເຍຊູເປັນຊາດໃດ? __________________________________________

**6** ໃນ 4 ຂໍ້ຕໍ່ໄປນີ້ໃຫ້ໝາຍຂໍ້ທີ່ຖືກ (ເລືອກຂໍ້ດຽວ)

ກ. ໂຊໂລເປັນຊາດຢິວ ແຕ່ພະເຍຊູບໍ່ເປັນ

ຂ. ພະເຍຊູເປັນຊາດຢິວ ແຕ່ໂຊໂລບໍ່ເປັນ

ຄ. ທັງສອງບໍ່ເປັນຊາດຢິວ

ງ. ທັງພະເຍຊູແລະໂຊໂລເປັນຊາດຢິວ

**7** ກ. ທັງພະເຍຊູແລະໂຊໂລເປັນຊາດໃດ? ____________________________________

ຂ. ດັ່ງນັ້ນ ເຂົາທັງສອງເປັນລູກຫຼານຂອງໃຜ? __________________________________

ຄຳຕອບ:

**1** *ຄ*

**2** *ກ. ໂຊໂລ ຂ. ຢິວ ຄ. ຕ່າງຊາດ*

**3** *ກ. ຢິວ ຂ. ຄົນຕ່າງຊາດ*

**4** *ກ. ອັບລາຮາມ (ແລະຊາລາ) ຂ. ອັບລາຮາມ (ແລະຊາລາ)*

**5** *ກ. ອັບລາຮາມ ຂ. ຊາດຢິວ*

**6** *ຂໍ້ ງ ຖືກ*

**7** *ກ. ຢິວ ຂ. ອັບລາຮາມ*

**ການບ້ານບົດທີ 1 ພາກປາຍ**

# ພະທຳຄາລາເຕຍ

**1** 2000 ປີກ່ອນການກຳເນີດຂອງພະເຢຊູແລະໂປໂລ ພະຜູ້ເປັນເຈົ້າຊົງໃຫ້ຄຳສັນຍາທີ່ ສຳຄັນຕໍ່ອັບລາຮາມ.

ກ. ໂດຍທ່ານອັບລາຮາມຊົນຊາດທັງປວງຈະໄດ້ຮັບຫຍັງ? (ເລືອກ)

_______ ພະພອນ

_______ ການປ້ອຍດ່າ

_______ ການທຳລາຍ

ຂ. ພະພອນນີ້ເພື່ອໃຜ? (ເລືອກ)

_______ ປະເທດຢິວປະເທດດຽວ

_______ ບໍ່ແມ່ນເພື່ອປະເທດໃດເລີຍ

_______ ເພື່ອທຸກປະເທດ



( ຄາລາເຕຍ 3:8 )

**2** ພະເຈົ້າສັນຍາວ່າ ຈະໃຫ້ທຸກຊາດຮັບພະພອນໂດຍທາງໃດ? _______________________

**3** 2000 ປີ ຫຼັງຈາກອັບລາຮາມ ໂປໂລໄດ້ຂຽນດັ່ງຕໍ່ໄປນີ້:

...ພະຄຼິດໄດ້ຊົງເກີດ ...ເພື່ອສະແດງຄວາມສັດຈິງຂອງພະເຈົ້າ ເພື່ອຈະໃຫ້ຂໍ້ຄວາມທີ່ຊົງສັນຍາໄວ້ແກ່ພວກບັນພະບຸລຸດນັ້ນ... ເພື່ອຄົນຕ່າງຊາດຈະໄດ້ຖະຫວາຍພະກຽດແກ່ພະເຈົ້າ (ໂລມ 15:8-9)

ກ. ແມ່ນໃຜຂຽນຈົດໝາຍສະບັບນີ້? _________________________________________

ຂ. ສັນຍາໄວ້ແກ່ພວກໃດ? ______________________________________________

ຄ. ພະເຈົ້າບອກຄຳສັນຍານັ້ນໃຫ້ບັນພະບຸລຸດບຸກຄົນໃດ? __________________________

ງ. ຕາມໂລມ 15:8 ຄຳສັນຍານັ້ນສຳເລັດໃນອົງໃດ? _____________________________

ຈ. ແມ່ນພວກໃດທີ່ຈະຮັບພະພອນໂດຍທາງພະອົງນັ້ນ? ____________________________

**4** ກ. ຜູ້ທີ່ຮັບຄຳສັນຍາຈາກພະເຈົ້ານັ້ນຊື່ຫຍັງ? ___________________________________

ຂ. ຄຳສັນຍານັ້ນສຳເລັດໃນໃຜ? _____________________________________________

**5** ພະພອນນັ້ນສຳເລັດໃນພະເຢຊູ ແຕ່ມີຊາດຢິວອີກຄົນໜຶ່ງທີ່ເປັນຜູ້ປະກາດເລື່ອງພະພອນນັ້ນ.



ອົງພະຄຣິດ. (ອຟຊ 3:8 )

ກ. ໃນຮູບນີ້ແມ່ນຜູ້ໃດເດີນທາງໄປ? __________

ຂ. ເປັນຊາດໃດ? ______________________

ຄ. ຄົນຢິວທີ່ປະກາດພະທຳໃຫ້ຄົນອື່ນ ຊື່ຫຍັງ?

________________________________

ງ. ປະກາດແກ່ໃຜ? ____________________

ຈ. ປະກາດເຖິງເລື່ອງຄວາມບໍລິບູນອັນຫາທີ່ປຽບບໍ່ໄດ້ຂອງໃຜ? ______________________

*ຈົ່ງຮັບພິຈາລະນາ*

**6** ພະພອນຂອງພະເຈົ້າມາເຖິງທ່ານແລ້ວໂດຍຜ່ານອາຈານໂປໂລແລະຄົນອື່ນໆ. ທ່ານເອງເຄີຍພົບພະພອນຢ່າງບໍລິບູນໃນພະເຢຊູຢ່າງໃດ? ________________________________

_______________________________________________________________

_______________________________________________________________

**7** ໂປໂລທີ່ເປັນສາວົກມາຍັງຄົນຕ່າງຊາດ ເດີນທາງໄປປະກາດຄວາມບໍລິບູນອັນທີ່ຫາປຽບບໍ່ໄດ້ຂອງອົງ ພະຄຣິດ ເດີນທາງໄປແຂວງໃດກ່ອນ? (ເລືອກ)

ກ. ແຂວງຄາລາເຕຍ

ຂ. ແຂວງໄຊຍະບູລີ

ຄ. ແຂວງຢູດາຍ




**8** ອາຈານໂປໂລໄປປ່າວປະກາດໃນແຂວງໃດກ່ອນ? ________________________

**9** ສ່ວນຄຳສັນຍາຂອງພະເຈົ້າທີ່ທຸກຊາດຈະຮັບພະພອນທາງເຊື້ອສາຍຢິວ:

ກ. ໃຜຮັບຟັງຄຳສັນຍານັ້ນ? ____________________

ຂ. ສຳເລັດໃນໃຜ? ____________________

ຄ. ໃຜປະກາດໄປເຖິງຄົນຕ່າງຊາດ? ____________________

ງ. ທັງ 3 ຄົນນັ້ນເປັນຊາດໃດ? ____________________

*ເພື່ອຮັບພິຈາລະນາຕໍ່*

**10** ຮູບແບບຂ້າງຂວາສະແດງເຖິງການເຜີຍພະພອນ ທີ່ພະເຈົ້າສັນຍາໃຫ້ອັບລາຮາມ 4000 ປີກ່ອນ.

ກ. ໃນເລກທີ 4 ໃຫ້ຂຽນຊື່ຄົນທີ່ປະກາດພະພອນນັ້ນໃຫ້ທ່ານ:

ຂ. ໃນເລກທີ 5 ໃຫ້ຂຽນຊື່ຂອງທ່ານເອງ:

ຄ. ໃນເລກທີ 6 ໃຫ້ຂຽນຊື່ຄົນທີ່ທ່ານຢາກນຳມາຫາພະພອນໃນພະເຢຊູ:

| |
|---|
| *1. ອັບລາຮາມ* |
| *2. ພະເຢຊູຄຼິດ* |
| *3. ອາຈານໂປໂລ* |
| *4.* |
| *5.* |
| *6.* |

*ຢ່າປະເລື່ອງນີ້ໄວ້ ແຕ່ໃຫ້ທ່ານອ້ອນວອນເພື່ອຄົນທີ່ທ່ານຂຽນຊື່ໃສ່ໃນກ່ອງທີ 6 ແລ້ວຊອກຫາໂອກາດເປັນພະຍານໃຫ້ຄົນນັ້ນ.*

ອາຈານໂປໂລປະກາດເລື່ອງພະເຢຊູໄປເຖິງແຂວງຄາລາເຕຍກ່ອນ ແລ້ວຕໍ່ໄປເພິ່ນຂຽນຈົດໝາຍສະບັບນີ້ໄປຫາເຂົາ. ແຕ່ໃນຈົດໝາຍນັ້ນເພິ່ນຕິບາງປະການ. ຕໍ່ໄປນີ້ຈະຍົກບາງຄວາມຈາກ ຄລຕ 1:1-10 (ຍົກແຕ່ບາງຄວາມ)

| |
|---|
| (ຂໍ້ 1) ໂຊໂລ ຜູ້ເປັນອັກຄະສາວົກ .... |
| (ຂໍ້ 2) ເຖິງ ຄຣິສຕະຈັກທັງຫຼາຍທີ່ຢູ່ໃນແຂວງຄາລະເຕຍ |
| (ຂໍ້ 3) ຂໍໃຫ້ພະຄຸນແລະສັນຕິສຸກ ຊຶ່ງມາຈາກພະບິດາເຈົ້າຂອງເຮົາທັງຫຼາຍແລະພະເຢຊູຄຼິດເຈົ້າຈົ່ງສະຖິດຢູ່ນຳເຈົ້າທັງຫຼາຍເທີນ |
| (ຂໍ້ 4) ພະເຢຊູຊົງສະລະພະກາຍຂອງພະອົງແທນຄວາມຜິດບາບຂອງເຮົາທັງຫຼາຍ... |
| (ຂໍ້ 6) ເຮົາຮູ້ສຶກປະຫຼາດໃຈທີ່ທ່ານທັງຫຼາຍພາກັນລະຖິ້ມພະອົງຢ່າງຮີບດ່ວນພະອົງເອີ້ນພວກເຈົ້າມາດ້ວຍພະຄຸນຂອງພະຄຼິດ ແຕ່ພວກເຈົ້າຕ່າວຄືນໄປຫາຂ່າວປະເສີດອັນແຕກຕ່າງເສຍ |
| (ຂໍ້ 7) ...ມີບາງຄົນໄດ້ເຮັດໃຫ້ພວກເຈົ້າວຸ້ນວາຍ ແລະປາຖະໜາທີ່ຈະປ່ຽນແປງຂ່າວປະເສີດເລື່ອງພະຄຼິດ. |
| (ຂໍ້ 8) ...ກໍໃຫ້ຜູ້ນັ້ນຖືກປ້ອຍດ່າ. |

**11** ໃຫ້ອ່ານຂໍ້ພະຄຳພີເຫຼົ່ານັ້ນຫຼາຍເທື່ອ ແລ້ວເລືອກເອົາຄວາມໃດທີ່ຖືກກວ່າ:

ກ. ໂຊໂລສະແດງຄວາມຍິນດີນຳເຂົາ ທີ່ເຂົາຕິດຕາມຂ່າວປະເສີດຂອງພະອົງໂດຍບໍ່ປ່ຽນແປງ.

ຂ. ໂຊໂລຕິຕຽນຜູ້ທີ່ສອນບໍ່ຈິງ ແລະຕິຕຽນຊາວຄາລາເຕຍທີ່ເຊື່ອຄວາມບໍ່ຈິງ.

ຄ. ໂຊໂລຕິຕຽນຄົນທີ່ສອນບໍ່ຈິງ ແຕ່ສະແດງຄວາມຍິນດີນຳຊາວຄາລາເຕຍທີ່ເຂົາບໍ່ເຊື່ອງ່າຍ.

ໃຫ້ທ່ານທວນບົດຮຽນນີ້ຄືນ ຈົນກວ່າຈະຕອບໄດ້ໝົດ ແລ້ວເປີດເສັງບົດນີ້ຢູ່ໜ້າ

ຄຳຕອບ:

**1** *ກ. ພະພອນ ຂ. ເພື່ອທຸກປະເທດ*

**2** *ອັບລາຮາມ*

**3** *ກ. ໂປໂລ ຂ. ບັນພະບຸລຸດ ຄ. ອັບລາຮາມ ງ. ພະຄຼິດ ຈ. ຄົນຕ່າງຊາດ*

**4** *ກ. ອັບລາຮາມ ຂ. ພະເຢຊູ*

**5** *ກ. ໂປໂລ ຂ. ຊາດຢິວ ຄ. ໂປໂລ ງ. ຄົນຕ່າງຊາດ ຈ. ອົງພະຄຼິດ*

**6** *ໃຫ້ແລກປ່ຽນຄຳຕອບຕໍ່ກັນແລະກັນ*

**7** *ກ ຖືກ*

**8** *ຄາລາເຕຍ*

**9** *ກ. ອັບລາຮາມ ຂ. ພະຄຼິດ ຄ. ໂປໂລ ງ. ຢິວ*

**10** *ກ. (ເອົາຕາມຄວາມຈິງ) ຂ. (ເອົາຕາມຄວາມຈິງ) ຄ. (ເອົາຕາມຄວາມຈິງ)*

**11** *ຂ ຖືກ*

**ການປະຊຸມບົດທີ 1**

## ຄຣິສຕະຈັກຄາລາເຕຍ

- *ໝາຍເຫດ: ຢ່າຮຽນບົດນີ້ຢູ່ບ້ານ ເອົາໄວ້ຮຽນກັບໝູ່.*

ຫຼັງຈາກໂປໂລກັບມາຈາກແຂວງຄາລາເຕຍ ເພິ່ນໄປລາຍງານເລື່ອງການປະກາດພະທຳໃນຄຣິສຕະຈັກທີ່ໃຊ້ເພິ່ນໄປ. ແຕ່ພໍດີໂປໂລລາຈາກຄາລາເຕຍໄປແລ້ວ ມີຄົນສວຍໂອກາດມາສອນຢ່າງບໍ່ຈິງ ໃຫ້ຄຣິສຕຽນໃໝ່ນັ້ນຫຼົງທາງ. ຄັນໂປໂລຮູ້ແລ້ວເພິ່ນຂຽນຈົດໝາຍໄປຫາທັນທີ. ແມ່ນຈົດໝາຍ ສະບັບນັ້ນທີ່ເຮົາຮຽນ!

ຄາລາເຕຍ 1:1-10 ແບ່ງເປັນສອງພາກຄື:

ຄຳແນະນຳ (ຄລຕ 1:1-5)

ການສອນບໍ່ຈິງ (ຄລຕ 1:6-10)

### ຄຳແນະນຳ (ຄລຕ 1:1-5)

**1** ໃຫ້ອ່ານ ຄລຕ 1:1-5 ກ່ອນ.

ກ. ຂໍ້ໃດບອກຊື່ຂອງຜູ້ຝາກ? ____________________

ຂ. ຂໍ້ໃດບອກຊື່ພວກຜູ້ທີ່ຮັບ? ____________________

ຄ. ຂໍ້ໃດແດ່ສະແດງຄຳນັບ? ____________________

**2** ໂປໂລບອກທັງຊື່ແລະພາລະ ຄືພາລະໃດ? ____________________

**3** ຄຳວ່າ "ສາວົກ" ນັ້ນໝາຍຄວາມວ່າ ເປັນຄົນທີ່ຮັບພາລະຂອງຜູ້ອື່ນແລະມີສິດເຕັມສ່ວນຈາກຜູ້ທີ່ ໃຊ້ໄປ. ຜູ້ທີ່ມາສອນບໍ່ຈິງ ສອນວ່າໂປໂລບໍ່ມີສິດເປັນສາວົກແທ້. ໃນຂໍ້ທຳອິດ ໂປໂລເນັ້ນວ່າແມ່ນ ໃຜແຕ່ງຕັ້ງເພິ່ນເປັນອັກຄະສາວົກ? (ລືອກ)

ກ. ມະນຸດ

ຂ. ພະເຢຊູ

ຄ. ພະບິດາ

**4** ຄັນເຮົາຮູ້ວ່າ ພະເຢຊູ ແລະພະບິດາແຕ່ງຕັ້ງໂປໂລໄວ້ເປັນສາວົກໝາຍຄວາມວ່ານັກປະພັນຂອງ ພະທຳຄາລາເຕຍມີສິດແຈ້ງຄວາມແທນໃຜ? ____________________

**5** ໂປໂລເນັ້ນວ່າເປັນອັກຄະສາວົກທີ່ພະເຢຊູແລະພະບິດາແຕ່ງຕັ້ງໄວ້ ແລະເພິ່ນຍັງອ້າງເຖິງເຫດການ ສຳຄັນສອງປະການໃນຊີວິດຂອງພະເຢຊູ.

ກ. ຂໍ້ທີ 4 ອ້າງເຖິງເຫດການໃດ? ____________________

ຂ. ຂໍ້ທີ 1 ອ້າງເຖິງເຫດການໃດ? ____________________

**6** ຂໍ້ 4 ບອກເຫດທີ່ພະບິດາເຈົ້າໃຫ້ພະເຢຊູສະລະຊີວິດ.

ກ. ແທນຫຍັງ? ______________________________

ຂ. ເພື່ອຫຍັງ? ______________________________

**7** ໃນຄຳແນະນຳ ນັກປະພັນມັກສະເໜີຈຸດສຳຄັນ. ຖ້າຢ່າງນັ້ນປາກົດວ່າການສະລະຊີວິດ ແລະ ການ ຄືນພະຊົນຈະເປັນຈຸດສຳຄັນໃນພະທຳເອເຟໂຊ. ເປັນຫຍັງເຮົາໄວ້ໃຈໄດ້ວ່າ ຈົດໝາຍ ເອເຟໂຊ ນີ້ເປັນພະຄຳຂອງພະເຈົ້າ? (ເລືອກ)

ກ. ເພາະມ່ວນຫູ

ຂ. ເພາະຜູ້ນຳໃນຄຣິສຕະຈັກບ້ານເຮົາບອກວ່າເປັນພະຄຳຂອງພະເຈົ້າ

ຄ. ເພາະໂປໂລເປັນອັກຄະສາວົກທີ່ພະເຈົ້າແຕ່ງຕັ້ງໄວ້.

*ການສະຫລູບເລື່ອງ*

**8** ໃຫ້ທ່ານຈົດຂໍ້ຄວາມຈາກ ຄລຕ 1:1-5 ທີ່ສອນເລື່ອງຕໍ່ໄປນີ້:

ກ. ເລື່ອງການຖະຫວາຍກຽດຕິຍົດແດ່ພະເຈົ້າ? ______________________________

ຂ. ເລື່ອງພະຄຸນແລະສັນຕິສຸກຈາກພະເຈົ້າ? ______________________________

ຄ. ພະເຈົ້າແຕ່ງຕັ້ງໂປໂລເປັນອັກຄະສາວົກ ເຮົາຈຶ່ງໄວ້ວາງໃຈໄດ້? ______________

ງ. ພະເຢຊູຕາຍແທນເຮົາເພື່ອໃຫ້ເຮົາພົ້ນຈາກສະໄໝປະຈຸບັນອັນຊົ່ວຮ້າຍ? __________

ຈ. ໂປໂລຝາກຈົດໝາຍນີ້ເຖິງຄຣິສຕະຈັກແຂວງຄາລາເຕຍ? ____________________

## ການສອນບໍ່ຈິງ (ຄລຕ 1:6-10)

**9** ໃຫ້ອ່ານ ຄລຕ 1:6-10 ກ່ອນ.

ກ. ຄຳສອນຂອງໂປໂລ ຊາວຄາລາເຕຍເປັນຢ່າງໃດ? (ເລືອກ)

— ເຊື່ອໝັ້ນ — ກ້າວໜ້າໃນຄວາມເຊື່ອ — ລະຖິ້ມຄວາມເຊື່ອ

ຂ. ການນີ້ເກີດຂຶ້ນໃນເວລາໃດ?

— ຢ່າງຮີບດ່ວນ — ເວລາອີກນານ

ຄ. ເກີດຍ້ອນເຫດໃດ?

— ໂປໂລສອນບໍ່ແຈ້ງ — ຜູ້ສອນບໍ່ຈິງມາສອນ

**10** ຄົນທີ່ສອນບໍ່ຈິງນັ້ນກໍເປັນຊາວຢິວທີ່ເຊື່ອໃນພະເຢຊູ ແຕ່ເຂົາຍົກຫຼັກຈາກສາສະໜາຢິວມາ ປະສົມກັບ ຂ່າວປະເສີດຈຶ່ງໃຫ້ຜູ້ຟັງວຸ້ນວາຍ. ເຖິງຄຣິສຕະຈັກໃນແຂວງຄາລາເຕຍປະກອບ ດ້ວຍຄົນຕ່າງຊາດ ກໍຕາມ ຍັງມີຊາດຢິວດ້ວຍ. ຄຣິສຕຽນຊາດຢິວເຫຼົ່ານັ້ນມັກຍົກຫຼັກສາ ສະໜາຢິວມາບັງຄັບໃຫ້ຄຣິສຕຽນຕ່າງຊາດຖືດ້ວຍ. ເຂົາບໍ່ພໍໃຈກັບຂ່າວປະເສີດເທົ່ານັ້ນ ໃນ ຄລຕ 1:6-10

ກ. ຂໍ້ໃດກ່າວເລື່ອງຂ່າວປະເສີດອັນແຕກຕ່າງ? ______________________________

ຂ. ຂໍ້ໃດກ່າວເລື່ອງຂ່າວປະເສີດອັນອື່ນ? ______________________________

ຄ. ຕໍ່ໄປຂໍ້ໃດກ່າວເລື່ອງຂ່າວປະເສີດອື່ນ? ______________________________

**11** ຄຳທີ່ເຂົາແປມາ "ວຸ້ນວາຍ" ໃນຂໍ້ທີ 7 ເປັນຄຳທີ່ໜັກຫຼາຍໃນພາສາເດີມ. ທ່ານເຄີຍເຫັນຄຣິສຕະຈັກໃດທີ່ມີຄົນສອນບໍ່ຈິງຈຶ່ງເກີດມີການວຸ້ນວາຍບໍ່? ______________________

________________________________________________________________

**12** ແຕ່ຍັງມີຄວາມທີ່ໜັກກວ່ານັ້ນອີກ ສ່ວນຄົນທີ່ຈະປ່ຽນຂ່າວປະເສີດ ໂປໂລຈະໃຫ້ຄົນເຫຼົ່ານັ້ນຖືກປ້ອຍ ດ່າ. ໂປໂລຢາກຫ້າມຄົນຢ່າງນັ້ນບໍ່ໃຫ້ມີສຽງໃນຄຣິສຕະຈັກຕໍ່ໄປ.

ກ. ແມ່ນໃນຂໍ້ໃດແດ່ທີ່ເຫັນຄຳວ່າ "ໃຫ້ຜູ້ນັ້ນຖືກປ້ອຍດ່າ"? ຂໍ້ _______ ແລະ ຂໍ້ _______

ຂ. ຄວນເຮັດຢ່າງໃດຈຶ່ງຈະບໍ່ໃຫ້ຜູ້ສອນບໍ່ຈິງມີສຽງໃນຄຣິສຕະຈັກ? ________________

**13** ເຫັນວ່າອາຈານໂປໂລປ້ອຍດ່າເຂົາຢ່າງນັ້ນ ບາງຄົນອາດຈະຄິດວ່າ ໜັກໂພດ. ເຂົາອາດຈະຄິດ ວ່າໂປໂລກຽດຊັງຄົນໜຶ່ງຄົນໃດຈຶ່ງປ້ອຍດ່າຢ່າງນັ້ນ ແຕ່ໃນຂໍ້ທີ 8 ມີຫຼັກຖານວ່າບໍ່ແມ່ນເລື່ອງ ສ່ວນຕົວຕໍ່ບຸກຄົນໃດ. ເຖິງແມ່ນວ່າພວກເຮົາຫຼື _____________ ຈາກສະຫວັນກໍດີທີ່ປະກາດຢ່າງອື່ນກໍຍັງຈະໃຫ້ຖືກປ້ອຍດ່າ. (ຕື່ມຄວາມທີ່ຂາດ)

**14** ໃນຂໍ້ທີ 6 ໂປໂລບອກວ່າພວກເຂົາ __________ ໄປຫາຂ່າວປະເສີດອັນແຕກຕ່າງ. (ຕື່ມ)

**15** ຖ້າຈະໃຊ້ຂ່າວປະເສີດຂອງພະເຍຊູໃນທາງທີ່ຜິດ ຊຶ່ງຈະທຳລາຍຄວາມເຊື່ອຂອງຄຣິສຕຽນໃໝ່. ໃນ ມທ 18:6-9 ພະເຍຊູກ່າວຄຳທີ່ຄ້າຍຄືກັນ. ຖ້າຈະປຽບຄຳຂອງພະເຍຊູກັບຄຳຂອງໂປໂລ ເຫັນວ່າໂປໂລເວົ້າເກີນຂອບເຂດບໍ່? ________________________________

**16** ສ່ວນພວກເຮົາໃນສະໄໝນີ້ເດ - ໃຫ້ອ່ານ ອຟຊ 4:11-15 ການສອນພະຄຳພີໃຫ້ຄຣິສຕຽນໃໝ່ຈະມີຜົນຮັບຫຼາຍປະການ. (ຕື່ມຄວາມທີ່ຂາດ)

ກ. ເພື່ອຈັດຕຽມໄພ່ພົນທັງຫຼາຍຂອງພະອົງໃຫ້ເປັນ _____________ທີ່ເໝາະສົມ. (ຂໍ້ 12)

ຂ. ເພື່ອເສີມສ້າງ _______________ ຂອງພະຄຣິດ(ຄືຄຣິສຕະຈັກ)ໃຫ້ຈະເລີນຂຶ້ນ. (ຂໍ້ 12)

ຄ. ຈົນກວ່າເຮົາທຸກຄົນຈະບັນລຸເຖິງຄວາມເປັນ ______________ ໃນຄວາມເຊື່ອ. (ຂໍ້ 13)

ງ. ແລະໃນ _____________________________ ເຖິງເລື່ອງພະບຸດຂອງພະເຈົ້າ. (ຂໍ້ 13)

ຈ. ຈົນກວ່າເຮົາຈະເປັນ _________________________________ ເຕັມສ່ວນ (ຂໍ້ 13)

ຄືເຕັມເຖິງຂະໜາດຄວາມສົມບູນ ຂອງພະຄຣິດ.

ສ. ເພື່ອພວກເຮົາຈະບໍ່ເປັນ ____________________ ອີກຕໍ່ໄປຖືກພັດໄປພັດມາ (ຂໍ້ 15)

ຊ. ແຕ່ໃຫ້ພວກເຮົາຍຶດເອົາຄວາມ _______________ ດ້ວຍໃຈ ________________

*(ທ່ານເອງກໍພົບຜົນຮັບເຫຼົ່ານັ້ນບໍ່? ໃຫ້ຮັບພິຈາລະນາ)*

*ໃຫ້ຮ່ວມອ້ອນວອນເພື່ອບັນຫາທີ່ທ່ານອາດຈະພົບໃນຊີວິດສ່ວນຕົວ ຫຼື ໃນຄຣິສຕະຈັກທີ່ທ່ານຮ່ວມປະຊຸມ.*

ຄຳຕອບ:

**1** *ກ. 1 ຂ. 2 ຄ. 3-5*

**2** *ສາວົກ*

**3** *ຂ ຖືກ*

**4** *ພະເຈົ້າ (ພະເຢຊູກໍໄດ້)*

**5** *ກ. ພະເຢຊູສະລະພະກາຍ ຂ. ພະເຢຊູຄືນພະຊົນ*

**6** *ກ. ຄວາມຜິດບາບຂອງເຮົາທັງຫຼາຍ ຂ. ໂຜດໃຫ້ເຮົາພົ້ນຈາກສະໄໝປະຈຸບັນອັນຊົ່ວຮ້າຍນີ້*

**7** *ຄ ຖືກ*

**8** *ກ. ຂໍ້ 5 ຂ. ຂໍ້ 3 ຄ. ຂໍ້ 1 ງ. ຂໍ້ 4 ຈ. ຂໍ້ 2*

**9** *ກ. ລະຖິ້ມຄວາມເຊື່ອ ຂ. ຢ່າງຮີບດ່ວນ ຄ. ຜູ້ສອນບໍ່ຈິງມາສອນ*

**10** *ກ. 6 ຂ. 7 ຄ. 9*

**11** *(ຖ້າມີ ໃຫ້ເຂົາປຶກສາຫາລືກັນໃນເລື່ອງນີ້)*

**12** *ກ. 8 ແລະ 9 ຂ. (ຄຳຕອບບໍ່ຕາຍຕົວ ແຕ່ອາດຈະມີສ່ວນໃນການ ສອນຈາກພະຄຳພີ ການເຊື່ອຟັງພະວິນຍານ ຕໍ່ສູ້ການບໍ່ຈິງ ໆລໆ)*

**13** *ເທວະດາ*

**14** *ຕ່າວຄືນ*

**15** *ບໍ່ເກີນ*

**16** *ກ. ຜູ້ຮັບໃຊ້ ຂ. ພະກາຍ ຄ. ນ້ຳໜຶ່ງໃຈດຽວກັນ ງ. ຄວາມຮູ້*
*ຈ. ຄົນໃໝ່ ສ. ເດັກນ້ອຍ ຊ. ຈິງ... ຮັກ*